**ຄຳແນະນຳສຳລັບຜູ້ຂຽນບົດຄວາມລົງວາລະສານ**

1. **ການຕັ້ງຂະໜາດເຈ້ຍ (Page Setup)**

- **Paper Size:** A4, Apply to: Whole Document
- **Margins:** Top: 2.54 cm, Bottom: 2.54 cm, Lelf: 3.25 cm, Righy: 2.54 cm, Header = 1.25 cm and Footer = 1.25 cm

2. **ຂະໜາດ, ຮູບແບບພາສາ ແລະ ຕົວເລກ**

- ຊື່ຫົວຂໍ້ບົດຄວາມທັງພາສາລາວ ແລະ ອັງກິດ 14 ເຂັ້ມ, ຫົວຂໍ້ນ້ອຍມີຂະໜາດຟ້ອນແມ່ນ 12 ເຂັ້ມ ແລະ ເນື້ອໃນທົ່ວໄປ 12 ທຳມະດາ
- ພາສາລາວ ແມ່ນເຜັດສະລາດໂອທີ (Phetsarath OT), ພາສາອັງກິດ ແລະ ໂຕເລກ ແມ່ນ Time New Roman, ເລກທົດສະນິຍົມ: ຈ້ຳ (.) ແມ່ນໃຊ້ເປັນເລກສ່ວນເສດ: ຕົວຢ່າງ 95.35 %, ຖ້າເປັນ ເລກຫຼັກພັນ ແມ່ນໃຫ້ໃສ່ຈຸດ (,) ຕົວຢ່າງ: 1,000 ແລະ ບໍ່ໃຫ້ມີເລກທີຫົວຂໍ້ (ຫົວຂໍ້ໃຫ້ເຮັດເປັນຕົວເຂັ້ມເລີຍ).

3. **ຊື່ຜູ້ຂຽນບົດຄວາມ ແລະ ທີ່ຢູ່:**

   - ຊື່ ແລະ ນາມສະກຸນ ເປັນພາສາລາວ ແລະ ພາສາອັງກິດ ບໍ່ໃຫ້ໃສ່ນາມມະຍົດ ຫຼື ຕຳແໜ່ງຕ່າງໆ, ທີ່ຢູ່ແມ່ນບອກກົມກອງ ແລະ ອີເມວ.

   **ຕົວຢ່າງ: ຊື່ນັກຄົ້ນຄວ້າ ກ*, ຊື່ນັກຄົ້ນຄວ້າ ຂ, ນັກຄົ້ນຄວ້າ ຄ,….. (ຟອນ 12 ເຂັ້ມ)**

   ຊື່ພາກສ່ວນທີ່ເຮັດການຄົ້ນຄວ້າວິໄຈ: ພາກວິຊາ, ຄະນະວິຊາ, ມະຫາວິທະຍາໄລ (ຟອນ 11)

   *ຊື່ຜູ້ຕິດຕໍ່ພົວພັນ, ທີ່ຢູ່ ພາກວິຊາ, ຄະນະວິຊາ, ມະຫາວິທະຍາໄລ, ເບີໂທ, ອີເມວ (ຟອນ 11)

   ພາສາອັງກິດ: **Vansaleum PHENGVICHITH*, A….., B…… (ຟອນ 12 ເຂັ້ມ)**

ຊື່ພາກສ່ວນທີ່ເຮັດການຄົ້ນຄວ້າວິໄຈ: ພາກວິຊາ, ຄະນະວິຊາ, ມະຫາວິທະຍາໄລ (ພາສາອັງກິດ, ຟອນ 11)

*ຊື່ຜູ້ຕິດຕໍ່ພົວພັນ, ທີ່ຢູ່ ພາກວິຊາ, ຄະນະວິຊາ, ມະຫາວິທະຍາໄລ, ເບີໂທ, ອີເມວ (ພາສາອັງກິດ, ຟອນ 11)

ໝາຍເຫດ: ໃຫ້ຂຽນຢູ່ລຸ່ມຫົວຂໍ້ພາສາອັງກິດ

4. **ບົດຄັດຫຍໍ້ ແລະ ເນື້ອໃນບົດ:**

   - **ບົດຄັດຫຍໍ້:** ບົດຄວາມພາສາລາວ ແມ່ນມີບົດຄັດຫຍໍ້ເປັນພາສາອັງກິດ 350 ຄຳ, ຖ້າຈະຕີພິມເປັນພາສາອັງກິດ ຕ້ອງມີບົດຄັດຫຍໍ້ເປັນພາສາວລາວ 1 ໜ້າເຈ້ຍ. ບົດຄັດຫຍໍ້ທັງພາສາລາວ ແລະ ພາສາອັງກິດ ແມ່ນປະກອບດ້ວຍຊື່ເລື່ອງ, ຈຸດປະສົງ, ວິທີການວິເຄາະຂໍ້ມູນ (ບອກໂດຍຫຍໍ້), ແລະ ຜົນໄດ້ຮັບຕາມຈຸດປະສົງ ແລະ ມີຄຳສັບສຳຄັນ (Key words). ຄຳສັບສຳຄັນ ບໍ່ໃຫ້ເກີນ 5 ຄຳ (ໂດຍນຳໃຊ້ເຄື່ອງໝາຍຈຸດ “,” ເພື່ອບົ່ງບອກເຖິງຄຳສັບສຳຄັນ) ແລະ ບໍ່ໃຫ້ມີຄຳວ່າ “ແລະ ຫຼື ຂອງ”.
   - **ເນື້ອໃນບົດ:** ພາກສະເໜີ, ຈຸດປະສົງ, ອຸປະກອນ ແລະ ວິທີການ, , ຜົນໄດ້ຮັບ, ອະພິປາຍຜົນ, ສະຫຼຸບ, ຂໍ້ສະເໜີແນະ ແລະ ຄຳຂອບໃຈ (ຖ້າມີ), ເອກະສານອ້າງອີງ. ລວມຈຳນວນໜ້າແມ່ນ 10-15 ໜ້າ.

**ພາກສະເໜີ:** ແມ່ນເປັນການແນະນຳຄວາມສຳຄັນ ທີ່ເປັນປັດໄຈພົ້ນເດັ່ນ ຂອງການຄົ້ນຄວ້າໃນຄັ້ງນີ້ ລວມທັງປະຫວັດການຄົ້ນຄວ້າເອກະສານ ຫຼື ວັນນະກຳທີ່ກ່ຽວຂ້ອງ ທີ່ມີການຄົ້ນຄວ້າເນື້ອຫາໃກ້ຄຽງກັນ ໃນໄລຍະຜ່ານມາ (ຄັດຈ້ອນເນື້ອໃນສຳຄັນໂດຍຫຍໍ້). ສະນັ້ນ, ຢູ່ໃນພາກນີ້ ຈະມີການກ່າວເຖິງເອກະສານອ້າງອີງຫຼາຍສົມຄວນ; ການອ້າງອີງຢູ່ເນື້ອໃນຂອງບົດ ໃຫ້ນຳໃຊ້ການອ້າງອີງ ຕາມແບບຂອງ APA. ແລະ ຢູ່ໃນວັກສຸດທ້າຍຂອງພາກນີ້ໃຫ້ລົງແຖວລະບຸ ຈຸດປະສົງຂອງການຄົ້ນຄວ້າ ໃນຫົວຂໍ້ດັ່ງກ່າວນີ້ດ້ວຍ.

5. **ເອກະສານອ້າງອີງ ຫຼື References:**

ໃຊ້ລະບົບ APA (American Psychological Association), ກໍລະນີເອກະສານອ້າງອີງທີ່ເປັນພາສາໄທ ໃຫ້ນັກຄົ້ນຄວ້າແປເປັນພາສາລາວ ແລະ ປີ ພ.ສ ໃຫ້ປ່ຽນເປັນ ຄ.ສ ຕາມຫຼັກການນຳໃຊ້ໃນລາວ.

6. **ການໃສ່ຕາລາງ, ຮູບພາບ:**

ຕາຕະລາງ: ຮູບພາບ, ແຜນພູມ, ແຜນທີ່..., ໃຫ້ໃສ່ໃນເນື້ອໃນບົດຄວາມໂດຍຊື່ຂອງຕາຕະລາງ, ຮູບພາບ, ແຜນພູມ, ແຜນທີ່...ແມ່ນໃຫ້ໃສ່ດ້ານເທິງ ໂດຍການໝາຍຕາລາງທີ 1, 2, 3 ແລະ ຮູບພາບທີ..., ແຜນພູມທີ...., ແຜນວາດທີ...., ແຜນທີ່ ທີ.... ກໍໃຫ້ເຮັດເຊັ່ນດຽວກັນ ສ່ວນດ້ານລຸ່ມໃຫ້ບອກແຫຼ່ງທີ່ມາຂອງຕາຕະລາງ, ຮູບພາບ, ແຜນພູມ, ແຜນທີ່...

ຮູບພາບ: 500x280 px

7. **ການນຳໃຊ້ຕົວຫຍໍ້:**

ກໍລະນີມີຕົວຫຍໍ້ ຂໍໃຫ້ນັກຄົ້ນຄວ້າຂຽນຕົວເຕັມກ່ອນແລ້ວບອກຕົວຫຍໍ້ໃນວົງເລັບໃນເບື້ອງຕົ້ນ ຕໍ່ໄປໃຫ້ໃຊ້ຕົວຫຍໍ້ໄດ້, ຕົວຢ່າງ: ຄະນະວິທະຍາສາດປ່າໄມ້ (ຄປມ) ຕໍ່ໄປໃຫ້ໃຊ້ ຄປມ ໄປເລີຍກໍໄດ້ ແລະ Faculty of Forest Science (FFS) ຕໍ່ໄປໃຫ້ໃຊ້ FFS.

**ບ່ອນຕິດຕໍ່ສົ່ງບົດຄວາມລົງວາລະສານ:** ພະແນກຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ຄປມ,


- ທ່ານ ວັນສະເຫຼີມ ແພງວິຈິດ, E-mail: v.phengvichith@nuol.edu.la ເບີໂທ ແລະ WhatsApp: 020 98888969 (ຂໍໃຫ້ທ່ານສົ່ງທັງສອງທາງ ຄື ທາງເມວ ແລະ ທາງວອດແອບ)
- ທ່ານ ເມັດມະນີ ສຸຂະວົງ, Email: m.soukhavong@nuol.edu.la ເບີໂທ ແລະ WhatsApp: 020 29898689 (ຂໍໃຫ້ທ່ານສົ່ງທັງສອງທາງ ຄື ທາງເມວ ແລະ ທາງວອດແອບ)